**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0818 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 30 ພຶດສະພາ 2023

# ແຈ້ງການ

**ຮຽນ:** - ບັນດາ ທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ນັບຖື;

- ບັນດາ ທ່ານ ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

**ເລື່ອງ:** ການຢຸດຕິການນຳເຂົ້ານ້ຳມັນເຊື້ອໄຟຂອງບາງແຂວງທີ່ມີເງື່ອນໄຂໃນໄລຍະທົດລອງ ຕາມຂໍ້ຕົກລົງ ເລກທີ 0997/ອຄ, ລົງວັນທີ 29 ກໍລະກົດ 2022.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 665/ຫສນຍ, ລົງວັນທີ 24 ເມສາ 2023.

ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດ ແຈ້ງທິດຊີ້ນຳ ຂອງ ທ່ານ ນາຍົກລັດຖະມົນຕີ ກ່ຽວກັບການນຳເຂົ້ານ້ຳມັນເຊື້ອໄຟຂອງບັນດາແຂວງ ຕາມຂໍ້ຕົກລົງເລກທີ 0997/ອຄ, ລົງວັນທີ 29 ກໍລະກົດ 2022 ມາຍັງ ທ່ານ ເພື່ອຈັດຕັ້ງປະຕິບັດ ດັ່ງນີ້:

1. ໃຫ້ ແຂວງ ຢຸດຕິການອະນຸມັດການນຳເຂົ້ານ້ຳມັນເຊື້ອໄຟໃຫ້ແກ່ວິສາຫະກິດພາຍໃນແຂວງນຳເຂົ້ານ້ຳມັນເຊື້ອໄຟ ຕາມຂໍ້ຕົກລົງວ່າດ້ວຍການອະນຸມັດໃຫ້ນຳເຂົ້ານ້ຳມັນເຊື້ອໄຟຂອງບາງແຂວງທີ່ມີເງື່ອນໄຂໃນໄລຍະທົດລອງ ເລກທີ 0997/ອຄ, ລົງວັນທີ 29 ກໍລະກົດ 2022 ແລະ ແຈ້ງການສືບຕໍ່ ເລກທີ 0622/ຫອຄ, ລົງວັນທີ 21 ມີນາ 2023.
2. ການນຳເຂົ້ານ້ຳມັນເຊື້ອໄຟ ແມ່ນໃຫ້ປະຕິບັດຕາມ ດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017 ແລະ ຂໍ້ຕົກລົງວ່າດ້ວຍການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ເລກທີ 0317/ອຄ, ລົງວັນທີ 21 ມີນາ 2022 ຢ່າງເຂັ້ມງວດ.
3. ມອບໃຫ້ ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ແຈ້ງໃຫ້ ວິສາຫະກິດທີ່ແຂວງໄດ້ອະນຸມັດຜ່ານມາ ຫຼືກຳລັງສະເໜີຫາແຂວງເພື່ອພິຈາລະນາ ເພື່ອຮັບຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ລັດຖະມົນຕີ**

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດຖະມົນຕີ

ມະໄລທອງ ກົມມະສິດ